**ການບ້ານບົດທີ 12 ພາກຕົ້ນ**

# ຕັ້ງໝັ້ນຢູ່ໃນເສລີພາບ

(ຄລຕ 5:1-15)

ໃນບົດນີ້ເຮົາເລີ້ມຕົ້ນຮຽນສ່ວນທີ 3 ຂອງພະທຳຄາລາເຕຍ ຄື ຄລຕ ບົດ 5 ແລະ 6 ທີ່ໂປໂລສອນເລື່ອງຊີວິດໃໝ່ໃນພະເຍຊູຄຣິດ.

**1** ຄາລາເຕຍ ບົດທີ 5 ສອນຕໍ່ເລື່ອງການເປັນຂ້ອຍຂ້າແລະການເປັນອິດສະລະ
ກ. ເມຍໃດຂອງອັບລາຮາມທີ່ເປັນຂ້ອຍຂ້າ? ________________________________
ຂ. ເມຍໃດບໍ່ເປັນຂ້ອຍຂ້າ? ____________________________________________

**2** ຕອນພະຄຳພີທີ່ຈະຮຽນມື້ນີ້ຄື ຄລຕ 5:1-15. ແຕ່ທຳອິດນີ້ໃຫ້ອ່ານແຕ່ ຄລຕ 5:1 ແລະ 5:13 ທີ່ກ່າວເຖິງຫົວເລື່ອງຄືການຕັ້ງໝັ້ນຢ່າງໃດ? ________________________________

**3** ກ. ໃຫ້ທ່ານ ອ່ານ ຄລຕ 5:1 ໂປໂລສັ່ງໃຫ້ຕັ້ງໝັ້ນຄົງໃນອັນໃດ? __________________
ຂ. ແມ່ນໃຜຊົງໂຜດໃຫ້ເຮົາເປັນອິດສະລະ? __________________________________

**4** ພະເຍຊູໄຖ່ເຮົາຈາກການເປັນຂ້ອຍຂ້າໂດຍລາຄາສູງ ຄືພະອົງຕາຍແທນເຮົາທີ່ໄມ້ກາງແຂນ. ຖ້າເຮົາບໍ່ຕັ້ງໝັ້ນໃນເສລີພາບນັ້ນ ພະເຍຊູຕາຍໂດຍບໍ່ມີປະໂຫຍດ. ໂປໂລເຕືອນບໍ່ໃຫ້ເຂົ້າຫຽມແອກເປັນ ________________________ (ຕື່ມຄວາມທີ່ຂາດ)

## ຢ່າປະຖິ້ມຄວາມເສລີພາບ

(ຄລຕ 5:1-12)

**5** ຖ້າເຮົາຈະໝັ້ນຄົງໃນຄວາມເສລີພາບ ເຮົາຕ້ອງຫຼີກເວັ້ນຈາກການເຂົ້າເປັນຂ້ອຍຂ້າ. ພະຍາມານທົດລອງເຮົາໃຫ້ຖືກົດທີ່ບໍ່ຖືກຕ້ອງ. ຮູບຕໍ່ໄປນີ້ສະແດງເຖິງການເຂົ້າຫຽມແອກ.




ກ. ມີສິ່ງໃດທີ່ໃສ່ຄໍງົວນັ້ນ? ____________________________________________
ຂ. ປຽບທຽບກັບຫຍັງ? _______________________________________________

**6** ທີ່ໄປໄລອ້າງເຖິງທຸງມແອກ ເພິ່ນອາດຈະຄິດເຖິງເມື່ອພວກຢິວເປັນທາດໃນປະເທດເອຢິບ. ພວກ ເອຢິບກົດຂີ່ຂົ່ມເຫັງຊາວຢິວຢ່າງໜັກຈົນວ່າເຂົາປຽບທຽບກັບການເຂົ້າທຽມແອກ. ພະເຈົ້າທຳ ລາຍອຳນາດຂອງເອຢິບເຂົາຈຶ່ງອອກເປັນຄົນອິດສະລະໄດ້ ຄືພະເຈົ້າຫັກແອກນັ້ນ.

ກ. ພວກຢິວເຄີຍຖືກການກົດຂີ່ຂົ່ມເຫັງໃນປະເທດໃດ? ____________________

ຂ. ແມ່ນໃຜຫັກແອກຂອງຊາວຢິວໃນເວລານັ້ນ? ____________________

ຄ. ຕໍ່ຈາກນັ້ນ ເຂົາເດີນອອກຈາກປະເທດເອຢິບໃນສະພາບໃດ? ____________________

**7** ຄົນທີ່ເປັນອິດສະລະເດີນໄປຢ່າງສະຫງ່າຜ່າເຜີຍ. ຄົນທີ່ຢ່າງເຂົ້າທຽມແອກເດີນໄປຢ່າງຄົນ ທີ່ໝົດ ຄວາມຫວັງ. ໃນສະໄໝນັ້ນ ຊາດຢິວເປັນທາດຊາດເອຢິບ ແຕ່ບາງເທື່ອມະນຸດເຮົາເຄີຍ ເປັນທາດ ຢ່າງອື່ນ ໆ ກໍມີ:

- *ທາດຂອງຄວາມຜິດ - ບາງຄົນທີ່ເຄີຍຜິດຫຼວງຫຼາຍມາກ່ອນ ອາດຈະສຳນຶກ ຜິດນັ້ນຈົນ ນອນບໍ່ຫຼັບກິນເຂົ້າບໍ່ແຊບ.*
- *ທາດຂອງຄວາມຢ້ານແລະທຸກຮ້ອນໃຈ*
- *ທາດຂອງຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ*

ກ. ໃນສະພາບການເປັນທາດສາມຢ່າງທີ່ເຫຼົ່າມານັ້ນ ມທ 15:1-2 ອ້າງເຖິງການເປັນທາດ ຢ່າງໃດ? ____________________

ຂ. ເຮັບເລີ 9:14 ອ້າງເຖິງການເປັນເສລີພາບຈາກທາດຢ່າງໃດ? ____________________

ຄ. ຟີລິບປອຍ 4:6-7 ເດ? ____________________

ງ. 1 ໂຢຮັນ 1:9? ____________________

ຈ. ໂຢຮັນ 14:27? ____________________

**8** ໃນເມື່ອພະເຢຊູຕາຍທີ່ໄມ້ກາງແຂນ ພະອົງປ່ອຍເຮົາຈາກການເປັນທາດຫຍັງ? (ເລືອກ)

ກ. ຈາກການເປັນທາດຄວາມສຳນຶກຜິດ

ຂ. ຈາກການເປັນທາດ ຄຳສອນທີ່ຕົກທອດຈາກເຖົ້າເກົ່າບູຮານ

ຄ. ຈາກພິທີແລະກົດຂອງມະນຸດ

ງ. ຈາກພະວິນຍານບໍລິສຸດ

ຈ. ຈາກຄວາມຢ້ານມະນຸດ

**9** ຖ້າເຮົາເຄີຍເປັນອິດສະລະບໍ່ຄວນກັບໄປເປັນທາດອີກຈັກເທື່ອ. ໃຫ້ອ່ານ ຄລຕ 5:1-4 ອີກ ຖ້າ ກັບໄປເປັນທາດອີກມີຜົນບໍ່ດີ 3 ປະການ.

ກ. ຖ້າຈະກັບໄປເປັນທາດອີກ ແມ່ນຫຍັງທີ່ບໍ່ເປັນປະໂຫຍດແກ່ເຮົາ? ____________________

ຂ. ຈະໄດ້ຖືກຕັດຂາດເສຍຈາກໃຜ? ____________________

ຄ. ຈະໄດ້ຫລຸດຈາກຫຍັງ? ____________________

**10** ເຫັນຜົນບໍ່ດີຢ່າງນັ້ນເປັນການເໝາະສົມທີ່ໂປໂລຈະກ່າວໂທດຕໍ່ຜູ້ທີ່ສອນບໍ່ຈິງ.
ໃຫ້ອ່ານ ຄລຕ 5:7-12 ອີກ.
ກ. ເຂົາຂັດຂວາງບໍ່ໃຫ້ພີ່ນ້ອງຄາລາເຕຍຟັງຄວາມຈິງ ເຫັນໃນຂໍ້ໃດ? _______________
ຂ. ເຂົາຊັກຊວນ ຢ່າງທີ່ບໍ່ໄດ້ມາຈາກພະເຈົ້າ ໃນຂໍ້ໃດ? ________________________
ຄ. ເພິ່ນຍົກເຊື້ອແປ້ງມາເປັນຕົວຢ່າງສິ່ງບໍ່ດີໃນຂໍ້ໃດ? _________________________
ງ. ເຂົາມາກໍ່ກວນພີ່ນ້ອງຈະໄດ້ຮັບໂທດ ເຫັນໃນຂໍ້ໃດ? ________________________
ຈ. ສ່ວນຄົນທີ່ຈະໃຫ້ພີ່ນ້ອງຮັບພິທີຕັດ ໜ້າຈະໃຫ້ເຂົາຕອນຕົວເອງເສຍໃນຂໍ້ໃດ? _______

**11** ມີຫຼາຍສິ່ງຫຼາຍຢ່າງທີ່ຢາກດຶງດູດໃຫ້ເຮົາກັບໄປເປັນຂ້ອຍຂ້າ ແຕ່ເຮົາອາດຈະບໍ່ສັງເກດ. ຄົນເຮັດ ເຂົ້າຈີ່ເອົາເຊື້ອມາປະສົມກັບແປ້ງ ເມື່ອເຮົາເບິ່ງມັນກໍບໍ່ທັນບວມ ແຕ່ເອົາໄວ້ຄາວໜຶ່ງຈຶ່ງເຫັນມັນ ບວມ. ຢ່າງດຽວກັນກັບຄຳສອນບໍ່ຈິງອາດຈະບໍ່ເຫັນຜົນໃນທັນທີ ແຕ່ລໍຖ້າຄາວໜຶ່ງແລ້ວຈະເຫັນ ຜົນບໍ່ດີປາກົດອອກໃຫ້ເຫັນ. ໃນເລື່ອງທີ່ຍົກເຊື້ອແປ້ງມາເປັນຕົວຢ່າງໃນຂໍ້ທີ 9 ນັ້ນ ເຊື້ອແປ້ງ ປຽບທຽບກັບຫຍັງ? (ເລືອກ)
________ ຄຳສອນຈິງ ________ ເລື່ອງຜູ້ຫວ່ານ ________ ຄຳສອນບໍ່ຈິງ

**12** ຜູ້ສອນບໍ່ຈິງເຫຼົ່ານັ້ນ ສອນຢ່າງເປີດເຜີຍແລະບາງເທື່ອກໍ່ສອນຢ່າງລັບໆ. ເຂົາພະຍາຍາມຂົ່ມເຫັງພີ່ນ້ອງຊາວ ຄາລາເຕຍນັ້ນໃຫ້ເປັນທາດຂອງພະບັນຍັດອີກ. ຖ້າພີ່ນ້ອງຊາວຄາລາເຕຍບໍ່ຕ້ອນຮັບພິທີຕັດຕາມພະ ບັນຍັດຄົນທີ່ມາສອນບໍ່ຈິງຖືວ່າບໍ່ເປັນຄຼິດສະຕຽນສົມບູນ. ເຂົາດູຖູກວ່າເປັນຄຼິດສະຕຽນລະດັບທີສອງ. ໃຫ້ກັບໄປປຽບທຽບກັບລູກຂອງອັບລາຮາມສອງຄົນ:
ກ. ຕາມໃນ ຄລຕ 4:29 ລູກທີ່ເກີດຕາມທຳມະດາ ເຮັດຫຍັງຕໍ່ລູກທີ່ເກີດຕາມພະສັນຍາ? ____
ຂ. ໃນ ຄລຕ 5:11 ໂປໂລອະທິບາຍວ່າ ຖ້າເພິ່ນເທດສະໜາເລື່ອງໃຫ້ຮັບພິທີຕັດ ເພິ່ນຈະບໍ່ຖືກຂົ່ມເຫັງ ດັ່ງນັ້ນ ເຂົາສະດຸດໃຈແລະຂົ່ມເຫັງ ຍ້ອນເພິ່ນເທດສະໜາ ເລື່ອງຫຍັງ? __________
ຄ. ຕາມໃນ ຄລຕ 6:12 ຜູ້ທີ່ມາສອນບໍ່ຈິງໃຫ້ຊາວຄາລາເຕຍແມ່ນຮັບພິທີຕັດສະນັ້ນເຂົາ ເອງຈະບໍ່ຖືກຫຍັງ? _______________________________________________

*ຄືວ່າ ເຂົາຖືພະບັນຍັດທັງຖືພະເຢຊູດ້ວຍ. ເຂົາຢາກຫຼີກເວັ້ນຈາກການວິຈານຂອງຄົນອື່ນ.*

**13** ທວນຄືນ
ກ. ໃນ ຄລຕ 5:1 ທີ່ເລີ້ມຕົ້ນສ່ວນທີສາມໃນພະທຳຄາລາເຕຍ ໂປໂລສັ່ງໃຫ້ພີ່ນ້ອງຈຶ່ງເຮັດຢ່າງໃດ? _______________________________________________
ຂ. ສັ່ງໃຫ້ຢ່າເຮັດຫຍັງ? _______________________________________________

**14** ຖ້າເຮົາຈະຂັບລົດໄປຕາມຖະໜົນ ເຮົາຕ້ອງລະວັງຕົວບໍ່ໃຫ້ຕົກຂ້າງຂວາແລະຂ້າງຊ້າຍ ດ້ວຍ. ເຊັ່ນດຽວກັນກັບຄວາມເສລີພາບໃນຊີວິດຄຼິດສະຕຽນ ເຮົາຕ້ອງລະວັງຕົວທັງສອງຂ້າງຄື: ຢ່າປະຖິ້ມຄວາມເສລີພາບ ແລະ ຢ່າໃຊ້ຄວາມເສລີພາບໃນທາງບໍ່ຖືກ. ຖ້າຈະກັບໄປເປັນຂ້ອຍຂ້າຂອງພະບັນຍັດ ເຮົາຫຼົງຜິດຢ່າງໃດ? (ເລືອກ)
ກ. ປະຖິ້ມຄວາມເສລີພາບ
ຂ. ໃຊ້ຄວາມເສລີພາບຢ່າງບໍ່ຖືກ

## ຢ່າໃຊ້ຄວາມເສລີພາບໃນທາງບໍ່ຖືກ

(ຄລຕ 5:13-15)

**15** ອາດຈະມີບາງຄົນທີ່ຖືວ່າ ຖ້າເສລີພາບຢ່າງນັ້ນເຮົາເຮັດບາບຕາມໃຈກໍໄດ້ເພາະເປັນອິດສະລະແລ້ວ. ທີ່ໂປໂລເຕືອນບໍ່ໃຫ້ເອົາເສລີພາບນັ້ນເປັນຊ່ອງທາງປ່ອຍຕົວໄປຕາມທຳມະດາໂລກ ໝາຍ ຄວາມວ່າ ຢ່າງໃດ? (ເລືອກ)

ກ. ເສລີພາບທີ່ຈະເຮັດຕາມຕັນຫາທຸກປະການບໍ່ຈຳກັດ

ຂ. ເສລີພາບຈາກອຳນາດຄວາມບາບ.

**16** ພວກຄົນທີ່ມາສອນບໍ່ຈິງນັ້ນ ອາດຈະຫາວ່າໂປໂລອະນຸຍາດໃຫ້ເຮັດບາບຕາມໃຈ ເພາະພະເຈົ້າ ຈະຍົກຜິດບາບທຸກປະການ (ໃຫ້ອ່ານ ໂລມ 3:8 ແລະ 6:1-2) ຂໍ້ໃດໃນ ຄລຕ ບົດທີ 5 ນັ້ນທີ່ໂປໂລແຈ້ງລະອຽດເລື່ອງບັນຫານັ້ນ? ________________________________

**17** ບໍ່ແມ່ນວ່າເຮົາມີສິດເຮັດບາບຕາມໃຈ ໂປໂລຢາກສອນວ່າ ເຮົາມີເສລີພາບຈາກອຳນາດຂອງບາບ ດັ່ງນັ້ນເຮົາບໍ່ຕ້ອງຢູ່ໃຕ້ການປົກຄອງຂອງຄວາມບາບ.

ກ. ຄາລາເຕຍ 5:13 ສອນບໍ່ໃຫ້ເອົາເສລີພາບເປັນຊ່ອງທາງຫຍັງ?

____________________________________________________________

ຂ. ຕາມໃນ ຄລຕ 5:5 ເຮົາຈິ່ງລໍຄອຍເປັນຄົນຊອບທຳໂດຍພະວິນຍານແລະຫຍັງອີກ?

____________________________________________________________

**18** ໃນ 2 ກລທ 3:17 ເຫັນວ່າ ພະວິນຍານຂອງພະເຈົ້າຢູ່ທີ່ໃດ ມີຫຍັງອີກທີ່ຢູ່ທີ່ນັ້ນ? _______

**19** ກ. ຈຸດໝາຍປາຍທາງຂອງຄາລາເຕຍບົດທີ 5 ແລະ 6 ທີ່ຈະແຈ້ງດີແມ່ນຈິ່ງໃຫ້ອີງໃດຄຸ້ມຄອງເຮົາ?____________________________________________________

ຂ. ບໍ່ໃຫ້ປ່ອຍຕົວໄປຕາມຫຍັງ? ________________________________________

**20** ໃຫ້ອ່ານ ຄລຕ 5:14-15 ທີ່ເປັນຕົວຢ່າງທີ່ດີ.

ກ. ຂໍ້ໃດກ່າວເລື່ອງຄົນທີ່ຢູ່ໃຕ້ອຳນາດຂອງພະວິນຍານ? ________________________

ຂ. ຂໍ້ໃດກ່າວເລື່ອງຄົນທີ່ຢູ່ໃຕ້ການປົກຄອງຂອງຕັນຫາ? ________________________

**21** ກ. ໃນ ຄລຕ 5:13 ຄົນທີ່ຢູ່ໃຕ້ການປົກຄອງຂອງພະວິນຍານ ຈະຮັບໃຊ້ໃຜ? __________

____________________________________________________________

ຂ. ຮັບດ້ວຍທ່າທີໃດ? ____________________________________________

ຄ. ຕາມໃນ ຄລຕ 5:14 ຮວບຮວມເຂົ້າໃນຂໍ້ດຽວຄືຂໍ້ໃດ? ______________________

____________________________________________________________

**22** ກ. ແຕ່ຄົນທີ່ມາສອນບໍ່ຈິງ ບໍ່ມີຄວາມຮັກເພື່ອຊຶ່ງກັນແລະກັນຢ່າງນັ້ນ. ຕາມໃນ ຄລຕ 5:15 ເຂົາເຮັດຢ່າງໃດ? ____________________________________________

ຂ. ດັ່ງນັ້ນ ເຂົາຢູ່ຕາມພະວິນຍານ ຫຼືຕາມທຳມະດາໂລກ? ______________________

**23** ເຂົາເຮັດຄືງົວໃນຮູບນີ້:




ກ. ແມ່ນຫຍັງປະຖິ້ມແອກ? ____________________________________________

ຂ. ງົວນັ້ນເສລີພາບຢູ່ ແຕ່ມັນໃຊ້ຄວາມເສລີພາບໃນທາງບໍ່ຖືກ. ມັນໄລ່ໃຜ? __________

**24** ພີ່ນ້ອງໃນຄາລາເຕຍຢູ່ໃນສະພາບທີ່ສັບສົນແທ້ ເຂົາບໍ່ຍອມຮັບໃຊ້ກັນແລະກັນເພາະເຂົາບໍ່ຮັກຊຶ່ງກັນແລະກັນ ຍິ່ງຮ້າຍກວ່ານັ້ນອີກ ເຂົາກັດກິນຊຶ່ງກັນແລະກັນ. ໃນ ຄລຕ 5:15 ໂປໂລເຕືອນເຂົາວ່າຈົ່ງລະວັງ ຢ້ານວ່າຈະເປັນຢ່າງໃດ? __________________________________

**25** ໃຫ້ເບິ່ງຮູບງົວທັງສອງໃບໃນບົດຮຽນນີ້ອີກ.

ກ. ຮູບໃດສະແດງເຖິງການປະຖິ້ມຄວາມເສລີພາບ (ຮູບໃນຄຳຖາມ 5 ຫຼື ຄຳຖາມ 23) ___

ຂ. ຮູບໃດສະແດງເຖິງການໃຊ້ຄວາມເສລີພາບໃນທາງບໍ່ຖືກ? ____________________

*ຈົ່ງຮັບພິຈາລະນາ*

- *ຄຼິດສະຕະຈັກທີ່ທ່ານຢູ່ ເປັນຢ່າງໃດ - ຮັກກັນບໍ່ ຮັບໃຊ້ກັນແລະກັນບໍ່ ຫຼື ກັດກິນກັນບໍ່?*
- *ທ່ານເອງເດ ພ້ອມຈະຮັບໃຊ້ເຂົາ ຫຼືກັດກິນເຂົາ?*
- *ຖ້າມີການກັດກິນກັນ ໃຫ້ທ່ານຢ່າເຂົ້າຮ່ວມເປັນພັກພວກ ຢ້ານວ່າຈະແຜ່ອອກຢ່າງເຊື້ອແປ້ງ. ໃຫ້ທ່ານຮັບໃຊ້ເຂົາໂດຍຄວາມຮັກ ເພື່ອຈະສ້າງຄວາມສຳພັນໃນພະວິນຍານ.*

**26** ໃນຄັ້ງຕໍ່ໄປ ເຮົາຈະຮຽນເລື່ອງ ຄລຕ 5:16-26 ທີ່ບອກເຖິງສ່ວນແຕກຕ່າງກັນລະຫວ່າງການປົກຄອງຂອງພະວິນຍານແລະການປົກຄອງຕາມທຳມະດາໂລກ. ໃຫ້ອ່ານ ຄລຕ 5:19-23

ກ. ຂໍ້ໃດແດ່ກ່າວເຖິງງານຂອງມະນຸດທຳມະດາ? ______________________________

ຂ. ຂໍ້ໃດແດ່ກ່າວເຖິງຜົນຂອງພະວິນຍານ? __________________________________

ຄຳຕອບ:

**1** *ກ. ຣາຄານ ຂ. ຊາລາ*

**2** *ຕັ້ງໝັ້ນຢູ່ໃນເສລີພາບ*

**3** *ກ. ໃນຄວາມອິສະລະ ຂ. ພະເຢຊູຄຼິດ*

**4** *ຂ້ອຍຂ້າອີກ*

**5** *ກ. ແອກ ຂ. ການເປັນຂ້ອຍຂ້າ*

**6** *ກ. ເອຢິບ ຂ. ພະເຈົ້າ ຄ. ອິດສະລະ*

**7** *ກ. ທາດຂອງຄຳສອນທີ່ຕົກມາຈາກເຖົ້າເກົ່າບູຮານ ຂ. ທາດຂອງຄວາມຜິດ*
*ຄ. ທາດຂອງຄວາມທຸກຮ້ອນໃຈ ງ. ທາດຂອງຄວາມຜິດ*
*ຈ. ທາດຂອງຄວາມຫວຸ້ນວາຍແລະຄວາມຢ້ານ.*

**8** *ກ ຂ ຄ ຈ ຖືກ*

**9** *ກ. ພະຄຼິດ ຂ. ຈາກພະຄຼິດ ຄ. ຈາກພະຄຸນ*

**10** *ກ. ຂໍ້ 7 ຂ. ຂໍ້ 8 ຄ. ຂໍ້ 9 ງ. ຂໍ້ 10 ຈ. ຂໍ້ 12*

**11** *ຄຳສອນບໍ່ຈິງ*

**12** *ກ. ຂຶ້ນເຫັງ ຂ. ໄມ້ກາງແຂນ ຄ. ບໍ່ຖືກຂຶ້ນເຫັງ ເພາະເຫດໄມ້ກາງແຂນ*

**13** *ກ. ຈົ່ງຕັ້ງໝັ້ນຄົງຢູ່ ຂ. ຢ່າເຂົ້າທຽມແອກເປັນຂ້ອຍຂ້າອີກ*

**14** *ກ ຖືກ*

**15** *ຂ ຖືກ*

**16** *ຂໍ້ 13*

**17** *ກ. ປ່ອຍຕົວໄປຕາມທຳມະດາໂລກ ຂ. ຄວາມເຊື່ອ*

**18** *ເສລີພາບ*

**19** *ກ. ພະວິນຍານ ຂ. ທຳມະດາໂລກ*

**20** *ກ. ຂໍ້ 14 ຂ. ຂໍ້ 15*

**21** *ກ. ຮັບໃຊ້ຊຶ່ງກັນແລະກັນ ຂ. ດ້ວຍຄວາມຮັກ ຄ. ຈົ່ງຮັກເພື່ອນບ້ານເໝືອນຮັກ*
*ຕົນເອງ*

**22** *ກ. ກັດ ແລະກິນກັນ ຂ. ທຳມະດາໂລກ*

**23** *ກ. ງົວ ຂ. ໄລ່ເຈົ້າຂອງ*

**24** *ຈິບຫາຍໄປ*

**25** *ກ. 5 ຂ. 23*

**26** *ກ. ຂໍ້ 19-21 ຂ. ຂໍ້ 22-23*

## ການບ້ານບົດທີ 12 ພາກປາຍ

# ພະຄຸນຂອງພະເຈົ້າ

(ຄລຕ 5:4)

*ໂປໂລສອນຫຼັກຄວາມເຊື່ອຫຼາຍປະການ ແຕ່ສິ່ງສຳຄັນທີ່ສຸດອາດແມ່ນພະຄຸນຂອງພະເຈົ້າ. ໃນບົດຮຽນນີ້ ເຮົາຈະຮຽນຮູ້ເລື່ອງພະຄຸນຂອງພະເຈົ້າທີ່ເຫັນໃນພະທຳຄາລາເຕຍນີ້.*

**1** ກ່ອນອື່ນໃຫ້ເຮົາເປີດອ່ານເລື່ອງພະຄຸນໃນພະທຳເອເຟໂຊ 2:8-9 ໃຫ້ທ່ານອ່ານກ່ອນ. ຕາມ ອຟຊ 2:8-9 ພະຄຸນໝາຍຄວາມວ່າຢ່າງໃດ? (ເລືອກ)
ກ. ພະກະລຸນາທີ່ເປັນການຕອບແທນບຸນຄຸນຂອງເຮົາ
ຂ. ພະກະລຸນານອກເໜືອຈາກທີ່ຄວນ ຊຶ່ງພະເຈົ້າປະທານໃຫ້ຄົນທີ່ເຊື່ອ.

**2** ເມື່ອໂປໂລຍົກຄຳ "ພະຄຸນ" ນັ້ນ ໝາຍຄວາມວ່າ ເຮົາຄວນຈະຮັບ. ຄົນໃດດັ່ງຕໍ່ໄປນີ້ດຳເນີນຊີວິດໂດຍພະຄຸນ? (ເລືອກ)
ກ. ຜູ້ທີ່ຖ່ອມຕົວເຊື່ອໄວ້ວາງໃຈໃນພະອົງຮັບຄວາມລອດເປັນຂອງປະທານຈາກພະເຈົ້າ
ຂ. ຜູ້ທີ່ພະຍາຍາມຖືພະບັນຍັດຂອງໂມເຊເພື່ອຈະໄດ້ລອດ

**3** ພະກະລຸນາຕໍ່ຄົນທີ່ຄວນຮັບແຕ່ໂທດຄືຫຍັງ? (ເລືອກ)
_______ ພະມານດາ _______ ພະຄຸນ _______ ພະສັນຍາ

**4** ໃນ ກຈກ 13:43 ເຫັນວ່າໂປໂລແລະບາລະນາບາ ຕັກເຕືອນໃຫ້ພີ່ນ້ອງໃນອັນຕີໂອເຂຍປີຊີເດຍ ໃຫ້ຕັ້ງໝັ້ນຄົງໃນຫຍັງ? __________________________________________

**5** ແຕ່ມາເຖິງເວລາທີ່ໂປໂລຈະຂຽນຈົດໝາຍຄາລາເຕຍ ຫຼັງຈາກຜູ້ປະກາດພະທຳບໍ່ຈິງມາ ເພິ່ນຕ້ອງ ເຕືອນເຂົາຢ່າງໜັກກວ່າ
ກ. ໃນ ຄລຕ 1:6 ໂປໂລຫາວ່າ ຊາວຄາລາເຕຍພາກັນລະຖິ້ມພະອົງທີ່ຊົງເອີ້ນພວກເຂົາມາດ້ວຍຫຍັງ? ______________________________________________________
ຂ. ແລະໃນ ຄລຕ 5:4 ໂປໂລຫາວ່າເຂົາໄດ້ຫລຸດຕົກຈາກຫຍັງ? ____________________

| |
|---|
| ໃຫ້ເອົາບິກສີຟ້າຂີດກ້ອງຄຳວ່າ "ພະຄຸນ" ໃນຂໍ້ຕໍ່ໄປນີ້:<br>ກຈກ 13:43 (ເຕືອນໃຫ້ເຂົາຕັ້ງໝັ້ນຄົງໃນພະຄຸນ)<br>ຄລຕ 1:6 (ເຂົາລະຖິ້ມພະອົງທີ່ໃຫ້ພະຄຸນ)<br>ຄລຕ 5:4 (ເຂົາຫລຸດຕົກຈາກພະຄຸນແລ້ວ) |

**6** ມາເຖິງນີ້ ເຮົາເຫັນໂປໂລເນັ້ນເລື່ອງພະຄຸນ
ກ. ເລີ້ມຕົ້ນກ່າວເລື່ອງພະຄຸນໃນບົດທີ 1 ຂໍ້ໃດ? ________________________________
ຂ. ເທື່ອສຸດທ້າຍ ເຫັນຄຳວ່າ "ພະຄຸນ" ໃນບົດທີ 6 ຂໍ້ໃດ? ________________________

**7** ໃນຄລຕ 1:3 ນັ້ນໂປໂລຂໍໃຫ້ພີ່ນ້ອງຊາວຄາລາເຕຍຮັບສອງຢ່າງໃດ?

____________________________ ແລະ _____________________________________

*ໃຫ້ທ່ານຮັບພິຈາລະນາເລື່ອງ ພະຄຸນ ແລະ ສັນຕິສຸກສອງຢ່າງນັ້ນ ເພາະແມ່ນໂດຍພະຄຸນແລະສັນຕິສຸກນັ້ນທີ່ຖືກສະຫງຽນເຮົາຢູ່ຢ່າງເສລີພາບໄດ້. ເຖິງໂປໂລຢູ່ໃນຄຸກກໍຕາມເພິ່ນຍັງຮູ້ສຶກວ່າມີສັນຕິສຸກຂອງພະເຈົ້າ.*




**8** ກ. ແມ່ນຫຍັງທີ່ສ່ອງແສງເໝືອນດວງຕາເວັນ?

_________________________________

ຂ. ແລ້ວຈິດໃຈຂອງຜູ້ນີ້ເຕັມໄປດ້ວຍຫຍັງ ເວລາເພິ່ງພະຄຸນຂອງພະອົງ? _________

*ຮັບພິຈາລະນາ*

*ໃນຫຼັກສູດນີ້ ທ່ານໄດ້ຮຽນຮູ້ເລື່ອງ "ພະຄຸນ". ຫວັງວ່າຈະເກີດຜົນໃນຊີວິດຂອງທ່ານ ເໝືອນຢ່າງໃນຊີວິດຂອງໂປໂລ.*

*ໃຫ້ທ່ານເຂົ້າແທນບ່ອນຄົນຢູ່ໃນຮູບນັ້ນຈົນກວ່າຈະສຳນຶກພະຄຸນຂອງພະເຈົ້າໃນຕົວຢ່າງຄົນທີ່ຜິງແດດ ສຳນຶກຄວາມອົບອຸ່ນຈາກຕາເວັນ ທັງຈະຮູ້ສຶກເຖິງສັນຕິສຸກຂອງພະເຈົ້າໃນຈິດໃຈຂອງຕົນ. ໃຫ້ທ່ານເພິ່ງເອົາ ພະຄຸນຂອງພະເຈົ້າຢ່າງນັ້ນທຸກ ໆ ວັນ.*

| |
|---|
| ໃຫ້ທ່ານເອົາບິກສີຟ້າຂີດກ້ອງຄຳວ່າ "ພະຄຸນ" ໃນຂໍ້ຕໍ່ໄປນີ້:<br>ຄລຕ 1:3 (ໂປໂລເລີ້ມຕົ້ນພະທຳຄາລາເຕຍ)<br>ຄລຕ 6:18 (ທີ່ພະທຳສິ້ນສຸດລົງ) |

**9** ກ. ພະທຳຄາລາເຕຍ ເລີ້ມຕົ້ນໂດຍຄຳສອນເລື່ອງຫຍັງ? _________________________

ຂ. ໃນບົດແລະຂໍ້ໃດ? ______________________________________________

ຄ. ສິ້ນສຸດລົງໂດຍຄຳສອນໃດ? _________________________________________

ງ. ໃນບົດແລະຂໍ້ໃດ? ______________________________________________

**10** ພະທຳນີ້ ເລີ້ມຕົ້ນໂດຍຄຳສອນເລື່ອງພະຄຸນແລະຈົບລົງໂດຍຄຳສອນເລື່ອງພະຄຸນ ແຕ່ຍັງກ່າວເລື່ອງ ພະຄຸນໂດຍຕະຫຼອດ.

ກ. ໃນ ຄລຕ 1:15 ເຫັນວ່າພະເຈົ້າຊົງໂຜດເອີ້ນໂປໂລມາຮັບໃຊ້ພະອົງດ້ວຍຫຍັງ? _______

ຂ. ໃນ ຄລຕ 2:9 ແມ່ນສາມຄົນໃດທີ່ສັງເກດເຫັນພະຄຸນທີ່ພະເຈົ້າຊົງປະທານໃຫ້ໂປໂລ?

__________________________________ ແລະ __________________________

ຄ. ໃນ ຄລຕ 2:21 ໂປໂລບໍ່ໄດ້ເຮັດໃຫ້ພະຄຸນຂອງພະເຈົ້າເປັນຢ່າງໃດ? ____________

> ໃຫ້ທ່ານເອົາບິກສີຟ້າຂີດກ້ອງຄຳວ່າ "ພະຄຸນ" ໃນສາມຂໍ້ຕໍ່ໄປນີ້:
>
> ຄລຕ 1:15 (ພະເຈົ້າເອີ້ນໂປໂລມາຮັບໃຊ້ພະອົງ)
>
> ຄລຕ 2:9 (ອັກຄະສາວົກ 3 ຄົນສັງເກດເຫັນພະຄຸນທີ່ພະອົງປະທານໃຫ້ໂປໂລ)
>
> ຄລຕ 2:21 (ໂປໂລບໍ່ເຮັດໃຫ້ພະຄຸນຂອງພະເຈົ້າເປັນໂມຄະ)

**11** ທວນຄືນ. ທຸກເທື່ອທີ່ໂປໂລຍົກຄຳວ່າ "ພະຄຸນ" ມາເພິ່ນອ້າງເຖິງຫຍັງອີກນອກເໜືອຈາກນັ້ນ?

_________________________________________________________________

**12** ກ. ໃນ ກຈກ 13:43 ໂປໂລແລະບາລະນາບາເຕືອນໃຫ້ພີ່ນ້ອງຖືພະຄຸນຂອງພະເຈົ້າຢ່າງໃດ?

_________________________________________________________________

ຂ. ໃນ ຄລຕ 2:21 ໂປໂລເອງຖືພະຄຸນຢ່າງໃດ? ______________________________

**13** ກ. ແຕ່ຍັງມີອີກທີ່ບໍ່ຖືພະຄຸນຢ່າງໝັ້ນຄົງ. ໃນ ຄລຕ 5:4 ຄົນເຫຼົ່ານັ້ນເຮັດຢ່າງໃດຕໍ່ພະຄຸນ?

_________________________________________________________________

ຂ. ໃນ ຄລຕ 1:6 ແມ່ນພວກຄຼິດສະຕະຈັກໃດທີ່ຕ່າວຄືນໄປຫາຂ່າວປະເສີດອັນແຕກຕ່າງ?

_________________________________________________________________

**14** ກ. ໃຫ້ທ່ານອ່ານຄຳອຸປະມາເລື່ອງລູກທີ່ເສຍໃນ ພະທຳລູກາ 15:11-32. ເຖິງວ່າບໍ່ເຫັນຄຳວ່າ "ພະຄຸນ" ຂຽນລົງກໍຕາມ ແຕ່ເຫັນວ່າທ່າທີຂອງພໍ່ສະແດງຄວາມກະລຸນາຕໍ່ລູກທີ່ຄວນຮັບໂທດ. ເຫັນຄວາມກະລຸນາຂອງພໍ່ໃນ 4 ຂໍ້ໃດເປັນຕົ້ນ?

ຂໍ້ _________ ຂໍ້ _________ ຂໍ້ _________ ແລະ ຂໍ້ _________

ຂ. ແມ່ນລູກຄົນໃດທີ່ຮັບພະຄຸນຈາກພໍ່? (ຜູ້ກົກ ຫຼື ຜູ້ນ້ອງ) _______________________

ຄ. ລູກຄົນໃດບໍ່ຍອມຮັບ? ____________________________________________

*ຜູ້ເປັນນ້ອງຖ່ອມຕົວລົງ ບໍ່ມີຫຍັງກິນທັງບໍ່ມີເຄື່ອງນຸ່ງ. ບໍ່ມີສິ່ງໃດໃນຕົວເອງ ແຕ່ເຖິງຢ່າງ ນັ້ນກໍຕາມພໍ່ເຫັນມາແຕ່ໄກ ແລ້ວແລ່ນອອກໄປກອດຈູບລາວດ້ວຍຄວາມຮັກແພງ ເອົາເຄື່ອງນຸ່ງຢ່າງດີໃຫ້ ເອົາແຫວນມາສວມໃສ່ມື ເອົາເກີບມາສຸບໃສ່ຕີນ. ເປັນຕົວຢ່າງທີ່ສະແດງເຖິງພະຄຸນຂອງພະ ເຈົ້າ. ໃນຂໍ້ 21 ຜູ້ເປັນນ້ອງນັ້ນບອກວ່າ ໄດ້ເຮັດຜິດຕໍ່ພະເຈົ້າແລະຕໍ່ພໍ່ແລ້ວ ບໍ່ສົມຄວນທີ່ຈະໄດ້ ເອີ້ນວ່າເປັນລູກຂອງພໍ່ຕໍ່ໄປ ແຕ່ພໍ່ຍັງຮັບເປັນລູກຢູ່.*

**15** "ພະຄຸນ" ອ້າງເຖິງພະກະລຸນາຢ່າງໃດ? ______________________________________

*ຈົ່ງຮັບພິຈາລະນາ*

- *ໃຫ້ອ່ານ ໂຢຮັນ 1:14-18 ແລ້ວຮັບພິຈາລະນາເລື່ອງພະຄຸນໃນຕອນນັ້ນ.*
- *ໃຫ້ອ່ານ ລູກາ 14:12-14 ຖ້າພະຄຸນໝາຍເຖິງພະກະລຸນານອກເໜືອຈາກທີ່ຄວນ ພວກເຮົາຄວນມີໃຈກະລຸນາຕໍ່ຄົນອື່ນຢ່າງໃດ?*

ຄຳຕອບ:

**1** *ຂ ຖືກ*

**2** *ກ ຖືກ*

**3** *ພະຄຸນ*

**4** *ພະຄຸນຂອງພະເຈົ້າ*

**5** *ກ. ພະຄຸນຂອງພະຄຼິດ ຂ. ຈາກພະຄຸນ*

**6** *ກ. ຂໍ້ 3 ຂ. ຂໍ້ 18*

**7** *ພະຄຸນ ແລະ ສັນຕິສຸກ*

**8** *ກ. ພະຄຸນ ຂ. ສັນຕິສຸກ*

**9** *ກ. ພະຄຸນ ຂ. ຄລຕ 1:3 ຄ. ພະຄຸນ ງ. ຄລຕ 6:18*

**10** *ກ. ພະຄຸນ ຂ. ຢາໂກໂບ ເກຟາ (ເປໂຕ) ແລະ ໂຢຮັນ ຄ. ເປັນໂມຄະ*

**11** *ພະກະລຸນາ*

**12** *ກ. ໃຫ້ຕັ້ງໝັ້ນຄົງ ຂ. ບໍ່ເຮັດໃຫ້ພະຄຸນເປັນໂມຄະ*

**13** *ກ. ເຂົາຫລຸດຕົກຈາກພະຄຸນ ຂ. ຄຼິດສະຕະຈັກ ຄາລາເຕຍ*

**14** *ກ. ຂໍ້ 20 ຂໍ້ 22 ຂໍ້ 23 ແລະ ຂໍ້ 24 ຂ. ຜູ້ນ້ອງ ຄ. ຜູ້ກົກ*

**15** *ນອກເ ນືອທີ່ຄວນ*

**ໃນການປະຊຸມ ບົດທີ 12**

# ຜົນຂອງພະວິນຍານ

(ຄລຕ 5:16-26)

**1** ໃນບົດຮຽນນີ້ ເຮົາຈະຮຽນເລື່ອງພະວິນຍານບໍລິສຸດ. ຕອນພະຄໍາພີນີ້ກ່າວເລື່ອງ ພະວິນຍານຫຼາຍ.

ກ. ກ່າວເລື່ອງການຕໍ່ສູ້ລະຫວ່າງພະວິນຍານແລະຕັນຫາມະນຸດທໍາມະດາ ຕັ້ງແຕ່ຂໍ້ 16 ເຖິງຂໍ້ໃດ? ____________________

ຂ. ກ່າວເລື່ອງການງານຂອງມະນຸດທໍາມະດາ ຕັ້ງແຕ່ຂໍ້ໃດເຖິງຂໍ້ໃດ? ____________________

ຄ. ກ່າວເລື່ອງຜົນຂອງພະວິນຍານ ຕັ້ງແຕ່ຂໍ້ໃດເຖິງຂໍ້ໃດ? ____________________

ງ. ກ່າວເລື່ອງການຄຶງຕັນຫາມະນຸດໄວ້ທີ່ໄມ້ກາງແຂນຈາກຂໍ້ໃດໄປ? ____________________

*ຄືແບ່ງເປັນ 4 ພາກ*

## ການຕໍ່ສູ້ລະຫວ່າງມະນຸດທໍາມະດາແລະພະວິນຍານ

(ຄລຕ 5:16-18)

**2** ໃຫ້ອ່ານ ຄລຕ 5:16-18 ອີກທີ່ໂປໂລກ່າວເລື່ອງການຕໍ່ສູ້ຂ້າງໃນຈິດໃຈຂອງຄຼິດສະຕຽນ

ກ. ແມ່ນສອງຝ່າຍໃດທີ່ຕໍ່ສູ້ກັນ? ____________________

ຂ. ແມ່ນຝ່າຍໃດທີ່ມັກທໍາຕາມໃຈຕົນເອງ? ____________________

ຄ. ຕາມໃນ ຄລຕ 5:17 ມະນຸດທໍາມະດາມີຫຍັງຕໍ່ສູ້ກັບພະວິນຍານ? ____________________

*ເພາະເຫດນັ້ນ ສິ່ງທີ່ເຮົາຢາກເຮັດກໍເລີຍເຮັດບໍ່ໄດ້!*

**3** ໃນຄລຕ 5:16 ເຮົາຈະເຮັດຢ່າງໃດ ຈຶ່ງຈະບໍ່ເຮັດຕາມຕັນຫາຂອງມະນຸດ? ____________________

____________________

## ການງານຂອງມະນຸດທຳມະດາ

(ຄລຕ 5:19-21)

**4** ໃຫ້ອ່ານການງານຂອງມະນຸດທຳມະດາໃນ ຄລຕ 5:19-21 ນັ້ນ. ເຫັນມີຄວາມຊົ່ວຫຼາຍປະການ. ເຖິງຈະຫຼາຍປານນັ້ນກໍຕາມ ແຕ່ຍັງບໍ່ຄົບເທື່ອ. ມີຄວາມໃດໃນຂໍ້ 21 ທີ່ສະແດງວ່າການງານນັ້ນຍັງບໍ່ຄົບ? ________________________________________

**5** ການງານຂອງມະນຸດທຳມະດານີ້ ແບ່ງເປັນ 4 ຢ່າງຄື: ເລື່ອງເພດ ເລື່ອງສາສະໜາ ເລື່ອງສັງຄົມມະນຸດ ແລະ ເລື່ອງເຄື່ອງກິນ. (ໃຫ້ທ່ານແບ່ງຕາມແຕ່ລະຢ່າງນັ້ນ)

| ເພດ | ສາສະໜາ | ສັງຄົມມະນຸດ | ເຄື່ອງກິນ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |

**6** ກ. ຊົ່ວໃດຫຼາຍທີ່ສຸດ? ________________________________________

ຂ. ໃນ ຄລຕ 5:15 ໂປໂລ ເຕືອນເຂົາເລື່ອງຫຍັງກ່ຽວກັບຄວາມສຳພັນລະຫວ່າງພວກຄຼິດສະຕຽນ ດ້ວຍກັນ? ________________________________________

ຄ. ໃນ ຄລຕ 5:26 ເດ? ________________________________________

**7** ໃຫ້ອ່ານ ຄລຕ 5:21 ອີກ. ຄຳທີ່ວ່າ "ຄົນທີ່ເຄີຍເຮັດການຢ່າງນັ້ນ" ມີເນື້ອຄວາມວ່າ ຜູ້ທີ່ເຮັດມາຢູ່ສະເໝີ. ຄົນທີ່ເຮັດຢ່າງນັ້ນຢູ່ສະເໝີຈະບໍ່ມີສ່ວນໃນຫຍັງ? ____________________

________________________________________________________

# ຜົນຂອງພະວິນຍານ

(ຄລຕ 5:22-23)



ຄລຕ 5:16~21



ຄລຕ 5:22~26

**8** ກ. ຮູບໃດ (ເທິງຫຼືລຸ່ມ) ສະແດງເຖິງຜົນຂອງມະນຸດທໍາມະດາ? ____________________

ຂ. ຮູບໃດສະແດງເຖິງຜົນຂອງພະວິນຍານ? ________________________________

**9** ມີແຕ່ຄົນດຽວທີ່ສະແດງຜົນຂອງພະວິນຍານຢ່າງບໍລິບູນຄື ພະເຢຊູ. ຕໍ່ໄປນີ້ເຮົາຈະຍົກເອົາແບບຢ່າງ ພະເຢຊູສະແດງຜົນຂອງພະວິນຍານຂ້າງຊ້າຍ. ຂ້າງຂວາມີຊື່ຜົນຂອງພະວິນຍານທີ່ໂປໂລຍົກມາ ໃຫ້ທ່ານຂີດເສັ້ນຈັບຄູ່ກັນ (ຕາມຕົວຢ່າງທີ່ຂີດມາແລ້ວ)

*ໃຫ້ໃຊ້ແຕ່ສໍດໍາເພື່ອຈະລຶບອອກໄດ້!*

| ຕົວຢ່າງໃນຊີວິດຂອງພະເຢຊູ | ລາຍຊື່ທີ່ໂປໂລຍົກມາໃນ ຄລຕ 5:22-23 |
|---|---|
| ກ. ໂຢຮັນ 15:11 | (1) ຄວາມຮັກ |
| ຂ. ໂຢຮັນ 15:12-13 | (2) ຄວາມຍິນດີ |
| ຄ. ໂຢຮັນ 14:27 | (3) ສັນຕິສຸກ (ສະຫງົບສຸກ) |
| ງ. ໂຢຮັນ 13:3-5 | (4) ຄວາມອົດກັ້ນໄວ້ນານ |
| ຈ. ກຈກ 8:32 (ແລະ ມທ 27:14) | (5) ຄວາມປານີ |
| ສ. ມາລະໂກ 15:23 | (6) ຄວາມດີ |
| ຊ. ລູກາ 22:41-42 | (7) ຄວາມສັດຊື່ |
| ຍ. ລູກາ 22:51-52 | (8) ຄວາມສຸພາບອ່ອນຫວານ |
| ດ. ລູກາ 23:27-29 | (9) ການຮູ້ຈັກບັງຄັບຕົນ |

________________________________________________________

*ໃຫ້ທ່ານສັງເກດປະການທີ່ສໍາຄັນວ່າ ເຫດການໃນຊີວິດຂອງພະເຢຊູເຫຼົ່ານັ້ນທຸກປະການຕົກໃນວັນ ສຸດທ້າຍກ່ອນພະເຢຊູຈະຕາຍທີ່ໄມ້ກາງແຂນ. ໃນເມື່ອພະເຢຊູທຸກໃຈຢ່າງໜັກປານນັ້ນກໍຕາມ ພະອົງ ຍັງສະແດງຜົນຂອງພະວິນຍານຢູ່. ຜົນຂອງພະວິນຍານບໍ່ຂຶ້ນກັບສະຖານະການສິ່ງແວດລ້ອມ ແຕ່ເປັນອັນ ທີ່ຢູ່ໃນຈິດໃຈ.*

**10** ພະເຢຊູສອນເລື່ອງພະວິນຍານມາກ່ອນ ທັງເປັນຕົວ່ຢາງດ້ວຍ. ຕໍ່ໄປໂປໂລມາສອນຕາມເລື່ອງທີ່ ພະເຢຊູແນະນໍາມາ. ໃນໂຢຮັນ 15:1-2 ພະເຢຊູສອນຫຍັງກ່ຽວກັບຜົນ? ____________

________________________________________________________

________________________________________________________

**11** ກ. ຕາມໃນໂຢຮັນ 15:5 ຖ້າເຮົາເຂົ້າສະໜິດຢູ່ໃນພະອົງແລະພະອົງເຂົ້າສະໜິດຢູ່ໃນເຮົາ ຈະເກີດມີຜົນຢ່າງໃດ? __________________________________

ຂ. ຖ້າເຮົາແຍກຈາກພະອົງຈະເປັນຢ່າງໃດ? _________________________

**12** ໃຫ້ອ່ານ ໂລມ 8:29 ທີ່ວ່າ "ພະອົງກໍໄດ້ຊົງກຳນົດໄວ້ກ່ອນ ເພື່ອໃຫ້ເປັນຕາມແບບລັກສະນະແຫ່ງພະບຸດ". ເປັນການອັດສະຈັນທີ່ມະນຸດເຮົາຈະກາຍເປັນຕາມແບບລັກສະນະຂອງພະອົງ. ຜົນຂອງພະວິນຍານທີ່ສະແດງອອກໃນຊີວິດຂອງພະເຢຊູມີຢູ່ເພື່ອພວກເຮົາດ້ວຍ. ຖ້າເຮົາດຳເນີນຊີວິດເຕັມໄປໂດຍພະວິນຍານແລະຜົນຂອງພະວິນຍານສະແດງອອກໃນຊີວິດເຮົາ ຄົນອື່ນຈະເຫັນລັກສະນະຂອງໃຜໃນເຮົາ? ____________________________________

## ການຄຶງຕັນຫາມະນຸດໄວ້ທີ່ໄມ້ກາງແຂນ

(ຄລຕ 5:24-26)

**13** ຖ້າເຮົາເປັນຄຣິດສະຕຽນແລ້ວ ເຮົາຈະຊະນະຕັນຫາມະນຸດທຸກເທື່ອບໍ່? ບໍ່! ເຮົາຈະຊະນະໄດ້ໃນເມື່ອເຮົາຢູ່ໃນພະອົງຢ່າງກິ່ງອາໄສເຄືອອະງຸ່ນ. ໂປໂລສອນຢ່າງນີ້ ໃນ ຄລຕ 5:24-26 ເລື່ອງການບຳລຸງຊີວິດ

ກິ່ງທີ່ອາໄສເຄືອເກີດມີຜົນໄດ້ ເພາະມີທາງຮັບນ້ຳຫຼໍ່ລ້ຽງ

ຄຣິດສະຕຽນທີ່ອາໄສຢູ່ໃນພະເຢຊູເກີດມີຜົນໄດ້ຍ້ອນມີທາງຮັບພະວິນຍານ

- ເຮົາຄວນເປີດຮັບການບຳລຸງຊີວິດຈາກພະວິນຍານຢູ່ສະເໝີ
- ເຮົາຄວນປິດບໍ່ຮັບການບຳລຸງຕັນຫາມະນຸດທຳມະດາ

ກ. ຄລຕ 5:24 ອ້າງເຖິງການປິດຕໍ່ຕັນຫາ ຫຼືການເປີດຕໍ່ພະວິນຍານ? _______________

ຂ. ຄລຕ 5:25 ເດ? ______________________________________________

ຄ. ຄລຕ 5:26? ________________________________________________

**14** ເມື່ອເຂົາຄຶງຄົນໄວ້ທີ່ໄມ້ກາງແຂນ ບໍ່ມີການບຳລຸງຮ່າງກາຍ ເຂົາອາດຈະຢູ່ທີ່ໄມ້ກາງແຂນຫຼາຍວັນ ກ່ອນຈະຕາຍ. ຖ້າເຮົາຄຶງຕັນຫາຂອງມະນຸດທຳມະດາໄວ້ທີ່ໄມ້ກາງແຂນ ຕັນຫາອາດຈະບໍ່ຕາຍງ່າຍ ແຕ່ ວ່າບໍ່ດົນກໍ່ຈະຕາຍ. ເຮົາຈະຕ້ອງຕັດຫຍັງ ຈຶ່ງຈະຄຶງຕັນຫາມະນຸດທຳມະດານັ້ນໄວ້ໄດ້? ______________________________________________________

**15** ແຕ່ຖ້າເຮົາຈະຕັດທາງບຳລຸງຢ່າງໜຶ່ງນັ້ນ ເຮົາຄວນຮັບການບຳລຸງຢ່າງໃດ? (ຄລຕ 5:25)

_________________________________________________________________

*ໃຫ້ຄົນຜູ້ໜຶ່ງອ່ານຂໍ້ຄວາມຂອງພະເຢຊູ ໃນ ລູກາ 11:13 ແລະອີກຜູ້ໜຶ່ງອ່ານຂໍ້ຄວາມຂອງໂປໂລໃນ ຄລຕ 6:7-8*

*ໃຫ້ຮ່ວມກັນອ້ອນວອນຂໍໃຫ້ເຕັມໄປໂດຍພະວິນຍານຈຶ່ງຈະມີຜົນ ແລ້ວຈະກາຍເປັນແບບລັກສະນະ ຂອງພະເຢຊູຕໍ່ໜ້າຄົນອື່ນໆ.*

ຄຳຕອບ:

**1** *ກ. ເຖິງຂໍ້ 18 ຂ. ຂໍ້ 19-21 ຄ. ຂໍ້ 22-23 ງ. ຂໍ້ 24*

**2** *ກ. ມະນຸດທຳມະດາ ແລະ ພະວິນຍານ ຂ. ມະນຸດທຳມະດາ ຄ. ຕັນຫາ*

**3** *ຈົ່ງຍອມໃຫ້ພະວິນຍານເປັນຜູ້ຊີ້ງນຳພາ*

**4** *ທີ່ວ່າ "ແລະການອື່ນໆ ໃນທຳນອງນີ້ອີກ."*

**5**

| | | | |
|---|---|---|---|
| *ການຫຼິ້ນຊູ້* | *ການໄຫວ້ພະທຽມ* | *ການເປັນສັດຕູກັນ* | *ການເສບສຸລາຢາເມົາ* |
| *ການບໍ່ສະອາດ* | *ການເຊື່ອເວດມົນຄາຖາ* | *ວິວາດຜິດຖຽງກັນ* | *ການກິນລ້ຽງຢ່າງຊົ່ວຊ້າ* |
| *ການໂລພະຕັນຫາ* | | *ການຫິງສາກັນ* | |
| | | *ການຄຽດແຄ້ນກັນ* | |
| | | *ການໃຝ່ສູງຕໍ່ກັນ* | |
| | | *ການແຕກແຍກກັນ* | |
| | | *ການຖືພັກຖືພວກ* | |
| | | *ການອິດສາກັນ* | |

**6** *ກ. ລາຍຊື່ສັງຄົມມະນຸດ ຂ. ໂປໂລເຕືອນເຂົາເລື່ອງການກັດກັນແລະກິນກັນ*
*ຄ. ໂປໂລຫ້າມບໍ່ໃຫ້ທຸກກວນໃຈກັນ ແລະອິດສາກັນ.*

**7** *ຈະບໍ່ມີສ່ວນໃນລາຊະອານາຈັກຂອງພະເຈົ້າ*

**8** *ກ. ເທິງ ຂ. ລຸ່ມ*

**9** *ກ-(2) ຂ-(1) ຄ-(3) ງ-(8) ຈ-(4) ສ-(9) ຊ-(7) ຍ-(6) ດ-(5)*

**10** *ເຮົາປຽບເໝືອນກິ່ງອະງຸ່ນ ພະເຢຊູປຽບເໝືອນເຄືອອະງຸ່ນ ພະບິດາເປັນເຈົ້າຂອງສວນທີ່ຈະບຳລຸງເຮົາໄວ້ຈຶ່ງຈະເກີດມີຜົນໄດ້. (ຄຳຄ້າຍຄືກໍໄດ້)*

**11** *ກ. ມີຜົນຫຼາຍ ຂ. ບໍ່ອາດເຮັດສິ່ງໃດໄດ້*

**12** *ຂອງພະເຢຊູ (ໂດຍຜົນຂອງພະວິນຍານ)*

**13** *ກ. ການປິດຕັນຫາ ຂ. ການເປີດຕໍ່ພະວິນຍານ ຄ. ການປິດຕໍ່ຕັນຫາ*

**14** *ຕັດບໍ່ໃຫ້ມີການບຳລຸງ*

**15** *ໂດຍພະວິນຍານ*